**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

ເລກທີ 162 /ຫຄຊກລ.ຄພ.
ນະຄອນຫລວງວຽງຈັນ, ວັນທີ: 22 ກຸມພາ 2023

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ປະຈຳແຂວງ ອັດຕະປື

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 110/ຫຄຊກລ ລົງວັນ 06 ກຸມພາ 2023 ໃນວັນທີ 12 ຫາ 20 ກຸມພາ 2023, ໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ, ຄຄກລ ແຂວງ ຮ່ວມກັບໂຄງການເກັບກູ້ລະເບີດແຫ່ງຊາດປະຈຳແຂວງ ອັດຕະປື, ໄດ້ດຳເນີນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດ ຢູ່ແຂວງອັດຕະປື.

**ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນທະວີ ແກ້ວວິໄລ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ:
2. ທ່ານ ພອງສອນ ໄຊສົມບັດ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ:
3. ທ່ານ ບຸນປອນ ທຳມະວົງສາ ແພດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ:
4. ທ່ານ ເຂັມພອນ ພະສີວົງມີໄຊ ແພດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ:
5. ທ່ານ ສັນຕິ ແກ້ວວິໄຊ ຂັບລົດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ:
6. ທ່ານ ກິດວົງໄຊ ພຸດທະວົງ ວິຊາການ ຄຄກລ ແຂວງອັດຕະປື:
7. ທ່ານ ກ້ອຍ ຈັນວິໄລວັນ ວິຊາການ ຄຄກລ ແຂວງອັດຕະປື:

**ພາກສ່ວນ ຄກລ ແຂວງ ອັດຕະປື:**

1. ທ່ານ ສົມພອນ ຊາພູວົງ ຜູ້ຊ່ວຍຊ່ຽວຊານທຳລາຍລະເບີດ:
2. ທ່ານ ພູໄຊ ແກ້ວມະນີ ຜູ້ຊ່ວຍຊ່ຽວຊານທຳລາຍລະເບີດ:
3. ທ່ານ ນາງວຽງແກ້ວ ບໍສີປະເສີດ ຫົວໜ້າແພດປະຈຳສະໜາມ ຄກລ ແຂວງອັດຕະປື:

## II. ຈຸດປະສົງໃນການຕິດຕາມກວດກາ

ເພື່ອຕິດຕາມກວດກາການປະຕິບັດງານແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ເຊັ່ນ: ການບໍລິຫານຄຸ້ມຄອງ, ການບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້, ທຳລາຍ ລບຕ ການສະໜັບສະໜູນທາງດ້ານການແພດ, ການປະເມີນແຜນຮັບມືອຸປະຕິເຫດ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ2023, ເພື່ອເປັນການຊຸກຍູ້ການປະຕິບັດງານພາກສະ ໜາມ ແລະ ເພື່ອໃຫ້ເຂົ້າສູ່ລະບົບ, ເປັນເອກະພາບ ແລະ ມາດຕະຖານອັນດຽວກັນ.

- **ຈຳນວນພະນັກງານ ແລະ ຄຸນວຸດທິພະນັກງານ**

ຄກລ ແຂວງອັດຕະປື ມີພະນັກງານທັງໝົດ 155 ຄົນ ຍິງ 43 ຄົນ, ພະນັກງານຫ້ອງການມີ 20 ຄົນ, ຍິງ 04 ຄົນ, ພະນັກງານປະຈຳສະໜາມສະມີ 135 ຄົນ, ຍິງ 39 ຄົນ, ປະກອບທີມງານໂຄສະນາສຶກສາຄວາມສ່ຽງ 1 ທີມ ສຳຫຼວດບໍ່ແມ່ນວິຊາການ 1 ທີມ, ສາຫຼວດທາງດ້ານວິຊາການ 01 ທີມ, ກວດກູ້ມີ 11 ທີມ, ການປະກອບໂຄງຮ່າງ

ການຈັດຕັ້ງແມ່ນຖືກຕ້ອງ ແລະ ວິຊາການເກັບກູ້ທັງໝົດທີ່ກ່າວມານັ້ນໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

- **ກວດກາລະບົບເອກະສານ**

ໂຄງການເກັບກູ້ລະເບີດ ແຂວງອັດຕະປື ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສໍາຫຼວດຂັ້ນສອງ, ບົດລາຍງານຜົນສໍາເລັດຂັ້ນສາມ ແບບຟອມຄວບຄຸ້ມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈໍາວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດ, ອາການແພ້ຕ່າງໆຂອງພະນັກງານ ແລະ ເອກະສານອື່ນໆເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກໍານົດໄວ້.

- **ການເຄື່ອນໄຫວຕາມແຜນປີ 2023.**

ການປະຕິບັດງານແຜນປະຈໍາປີ 2023 ຄກລ ແຂວງເຄື່ອນໄຫວຢູ່ 05 ເມືອງຄື: ເມືອງ ໄຊເສດຖາ, ສາມັກຄີໄຊ, ສະໜາມໄຊ, ຊານໄຊ ແລະ ເມືອງ ພູວົງ.

- ວຽກງານໂຄສະນາສຶກສາຄວາມສ່ຽງ: ຕາມແຜນປີ 2023 ເຄື່ອນໄຫວຢູ່ບ້ານເປົ້າໝາຍ 48 ບ້ານ, ປະຈຸບັນປະຕິບັດແລ້ວ 6 ບ້ານ;
- ວຽກງານສໍາຫຼວດບໍ່ແມ່ນວິຊາການ: ຕາມແຜນປີ 2023 ເຄື່ອນໄຫວຢູ່ບ້ານເປົ້າໝາຍ 12 ບ້ານ, ປະຈຸບັນປະຕິບັດແລ້ວ 1 ບ້ານ;
- ການສໍາຫຼວດທາງດ້ານວິຊາການ: ຕາມແຜນປີ 2023 ເຄື່ອນໄຫວຢູ່ບ້ານເປົ້າໝາຍ 28 ບ້ານ , ປະຈຸບັນປະຕິບັດ ແລະ ກໍານົດເນື້ອທີ CHA ໄດ້ 27 ເຮັກຕາ;
- ວຽກງານກວດກູ້: ຕາມແຜນປີ 2023 ປະຕິບັດກວດກູ້ເນື້ອທີ່ 388,6 ເຮັກຕາ, ປະຈຸບັນປະຕິບັດແລ້ວ 39 ເຮັກຕາ;

ການເຄື່ອນໄຫວວຽກງານໂຄສະນາສຶກສາຄວາມສ່ຽງ, ວຽກງານສໍາຫຼວດບໍ່ແມ່ນວິຊາການ, ຄາດຄະເນແມ່ນຈະສາມາດບັນລຸຕາມແຜນປີ ສ່ວນວຽກງານສໍາຫຼວດທາງດ້ານວິຊາການ ແລະ ວຽກງານກວດກູ້ເນື້ອທີ່ຄາດວ່າຈະບໍ່ສາມາດປະຕິບັດໃຫ້ບັນລຸຕາມເປົ້າໝາຍ, ເນື່ອງຈາກວ່າໃນຕົ້ນປີ 2023 ນີ້, ທາງ ຄກລ ແຂວງອັດຕະປື ແມ່ນມີກອງປະຊຸມສະຫຼຸບລາຍງານ, ການຝຶກອົບຮົມ ແລະ ວຽກງານອື່ນທີ່ເຮັດໃຫ້ການເຄື່ອນໄຫວວຽກມີການຄາດເຄື່ອນທາງດ້ານເວລາ.

- **ການລົງຕິດຕາມຢູ່ພາກສະໜາມ**

ທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ລົງເຄື່ອນໄຫວຕິດຕາມການປະຕິບັດງານຂອງທີມງານ AC 01, AC08 ແລະ TS01, ຕິດຕາມການປະຕິບັດງານ, ການຄວບຄຸມບັນຊາ, ການສ້າງສະໜາມ ແລະ ຮັບຟັງການລາຍງານຂອງຫົວໜ້າທີມງານກ່ຽວກັບສະພາບສະໜາມ, ນອກນີ້ກໍ່ຍັງໄດ້ຕິດຕາມວຽກງານທໍາລາຍ, ຕິດຕາມການຝຶກຊ້ອມແຜນຮັບມືອຸປະຕິເຫດຂອງແພດປະຈໍາສະໜາມ, ຕິດຕາມເຕັກນິກການຊ່ວຍຊີບຜູ້ບາດເຈັບ ແລະ ການເອົາຄົນເຈັບຂຶ້ນພາຫະນະຮັບສົ່ງ.

ທີມງານຄຸ້ມຄອງຄຸນນະພາບຍັງໄດ້ລົງກວດກາຄວບຄຸມນະພາບ ( QC ) ສະໜາມທີ່ກວດກູ້ສໍາເລັດແລ້ວທັງໝົດ 6 ສະໜາມ, ລວມເນື້ອທີ່ທັງໝົດ 168,461 ມ$^2$ ເນື້ອທີ່ຄວບຄຸມຄຸນນະພາບ 4,425 ມ$^2$ ເທົ່າກັບ 2,62%. ຜ່ານການຄວບຄຸມຄຸນນະພາບພາຍນອກເຫັນວ່າ ສະໜາມທັງໝົດແມ່ນຜ່ານຂະບວນການຄວບຄຸມນະພາບພາຍນອກຫ້ອງ ການ ຄຊກລ ( QC ) ສະໜາມແມ່ນບໍ່ພົບເສດເຫຼັກໃຫຍ່ກ່ວາເຄິ່ງໜຶ່ງຂອງບົມບີ 26 ( ½ blu26)

## III. ຜົນການກວດກາ

ຜ່ານການລົງຕິດຕາມກວດກາຂອງຄະນະທີມງານສັງເກດເຫັນໄດ້ດັ່ງນີ້:

➢ **ຈຸດດີ.**

1. ການປະຕິບັດງານຂອງ ຄກລ ແຂວງອັດຕະປື ໄດ້ເຄື່ອນໄຫວວຽກງານພາຍໃຕ້ລະບຽບຕາມມາດຕະຖານການປະຕິບັດງານ ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.
2. ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
3. ສະໜາມເກັບກູ້ທີ່ສຳເລັດແລ້ວສ່ວນຫຼາຍກໍ່ຜ່ານຂະບວນການຄວບຄຸມຄຸນນະພາບບໍ່ພົບເສດເຫຼັກໃຫຍ່ກວ່າເຄິ່ງ ½ blu26.
4. ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.
5. ການລາຍງານຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ, ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື້ອ, ວິດຖ່າຍບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້,ສິ່ງທີ່ກ່າວຂ້າງເທິ່ງມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານແລະສອດຄ່ອງກັບມາດຕະຖານແຫ່ງຊາດ.

➢ **ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ແກ້ໄຂ.**

- ອຸປະກອນການແພດຮັບໃຊ້ຢູ່ພາກສະໜາມແມ່ນບໍ່ພຽງພໍ ຕາມSOP ຂອງ ຄກລ ກຳນົດໄວ້ໃນລາຍການອຸປະກອນການແພດແນະນຳໃຫ້ພາກສ່ວນກ່ຽວຂ້ອງລວບລວມນຳສະເໜີໃຫ້ ຂັ້ນເທິງສະໜອງໃຫ້ຄົບຕາມຄວາມຕ້ອງການ ( **ຕາມ SOP ຂອງ ຄກລ ໃນບົດທີ 8 ຂໍ້ 3.2 ອຸປະກອນການແພດ )**
- ແນະນຳໃຫ້ຫົວໜ້າທີມບັນທຶກແບບຟອມ QA, QC ໃຫ້ຖືກຕ້ອງ ແລະ ລະອຽດຂຶ້ນຕື່ມ.
- ແນະນຳໃຫ້ຫົວໜ້າທີມບັນທຶກທາດລະເບີດໃສ່ແບບຟອມບັນທຶກປະຈຳວັນທຸກຄັ້ງທີ່ເອົາວັດຖຸລະເບີດອອກໄປນຳໃຊ້ຢູ່ສະໜາມ,

ດັ່ງນັ້ນ, ຈຶ່ງລາຍງານມາທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ.**

**ບຸນເພັງ ສີສະຫວັດ**

**ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ.**

ບ່ອນສົ່ງ:

ສົ່ງ ໂຄງການເກັບກູ້ລະເບີດແຫ່ງຊາດ 1 ສະບັບ ເພື່ອລາຍງານ.

ສົ່ງ ຄກລ ແຂວງ ອັດຕະປື 1 ສະບັບ ເພື່ອຈັດຕັ້ງປະຕິບັດ.

ຫ້ອງການ ຄຊກລ ເພື່ອເກັບມ້ຽນ 1 ສະບັບ.ຫ້ອງການ ຄຄກລຂ ເກັບມ້ຽນ 1 ສະບັບ ເພື່ອລາຍງານ.ບ້ານ ທົ່ງສ້າງນາ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,

ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la